# ພາລະບົດບາດ

| | |
|---|---|
| **ຕຳແໜ່ງ** | ພະນັກງານກະສິກຳ ແລະ ປັບປຸງຊີວິດການເປັນຢູ່ ເມືອງ |
| **ຈຳນວນຕຳແໜ່ງ** | 14 |
| **ບ່ອນປະຈຳການ** | ຫ້ອງການໂຄງການ ປສຊ ປະຈຳເມືອງ |
| **ຜູ້ຊີ້ນຳ** | ຫົວໜ້າທີມງານເມືອງ |
| **ທີ່ປຶກສາດ້ານວິຊາການ** | ທີມງານ ກະສິກຳ ແລະ ປັບປຸງຊີວິດການເປັນຢູ່ ຂັ້ນສູນກາງ |
| **ໄລຍະເວລາສັນຍາ** | ສັນຍາເປັນປີ, ຕໍ່ສັນຍາໄດ້ໃນຊ່ວງໄລຍະເວລາຂອງໂຄງ, ຂຶ້ນກັບການທົບທວນຜົນງານປະຈຳປີ, ຄວາມຕ້ອງການຂອງໂຄງການ, ແລະ ງົບປະມານ |

## ກ. ສະພາບລວມກ່ຽວກັບໂຄງການ

ການປັບປຸງຊີວິດການເປັນຢູ່ຂອງຊາວຊົນນະບົດ ຂອງ ສປປ ລາວ ແມ່ນປັດໃຈສຳຄັນເພື່ອກ້າວໄປສູ່ ການຫຼຸດຜ່ອນຄວາມທຸກຍາກແບບຍືນຍົງ ໃນເຂດເນີນສູງຂອງ ສປປ ລາວ. ໃນຂະນະທີ່ ປະມານ 2/3 ຂອງປະຊາກອນຂອງປະເທດ ອາໄສຢູ່ໃນເຂດຊົນນະບົດ, ພວກເຂົາເຈົ້າ ກວມເອົາ 88% ຂອງຜູ້ທຸກຍາກ. ເກືອບທັງໝົດຂອງຜູ້ທຸກຍາກ ແມ່ນຄົວເຮືອນກະສິກຳ. ປະມານເຄິ່ງຫນຶ່ງຂອງຄົວເຮືອນກະສິກຳທີ່ທຸກຍາກ (ຫຼື 41% ຂອງຈຳນວນຜູ້ທຸກຍາກ) ດຳລົງຊີວິດຢູ່ໃນເຂດຫ່າງໄກສອກຫຼີກ, ສ່ວນຫຼາຍແມ່ນຢູ່ໃນເຂດເນີນສູງ; ມີພຽງແຕ່ 64% ຂອງກຸ່ມນີ້ ອາໄສຢູ່ໃນບ້ານທີ່ມີເສັ້ນທາງເຂົ້າເຖິງໄດ້ທຸກສະພາບອາກາດ. ດ້ວຍເຫດດນີ້, ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປສຊ) ເປັນໂຄງການພັດທະນາ ທີ່ນຳໃຊ້ຮູບແບບການພັດທະນາໂດຍຊຸມຊົນເປັນເຈົ້າ, ມີຈຸດປະສົງເພື່ອປັບປຸງຊີວິດການເປັນຢູ່ໃນເຂດຊົນນະບົດ ແລະ ການບໍລິໂພກອາຫານທີ່ມີຄວາມຫຼາກຫຼາຍສຳລັບຊຸມຊົນທຸກຍາກໃນພື້ນທີ່ເປົ້າໝາຍໂຄງການ, ພ້ອມທັງຕອບສະໜອງທັນທີ ແລະ ມີປະສິດທິຜົນໃນກໍລະນີເກີດວິກິດການ ຫຼື ເຫດການສຸກເສີນ. ໂຄງການດັ່ງກ່າວ ໄດ້ວາງເປົ້າໝາຍໃສ່ຊຸມຊົນທີ່ດ້ອຍໂອກາດໃນ ສປປ ລາວ ໃນ 7 ແຂວງ ຄື: ຫົວພັນ, ອຸດົມໄຊ, ຜົ້ງສາລີ, ຊຽງຂວາງ, ສາລະວັນ, ສະຫວັນນະເຂດ ແລະ ເຊກອງ. ນອກຈາກນັ້ນ, ໂຄງການ ປສຊ ແມ່ນສ່ວນໜຶ່ງຂອງວິທີການຫຼາຍຂະແໜງການຮ່ວມກັນຈັດຕັ້ງປະຕິບັດເພື່ອແກ້ໄຂບັນຫາດ້ານໂພຊະນາການ ແນໃສ່ຫຼຸດຜ່ອນບັນຫາເດັກຂາດໂພຊະນາການ ໃຫ້ເຫຼືອ ພຽງ 25% ໃນປີ 2025.

ໂຄງການປະກອບມີ 5 ອົງປະກອບ ຄື:

**ອົງປະກອບ 1: ການພັດທະນາເສດຖະກິດທ້ອງຖິ່ນ, ປັບປຸງໂຄງລ່າງ ແລະ ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ (27.6 ລ້ານໂດລາສະຫາລັດ).** ອົງປະກອບນີ້ ສະໜັບສະໜູນ ກິດຈະກຳທີ່ຈັດຕັ້ງປະຕິບັດຢູ່ໃນລະດັບຊຸມຊົນທັງຫມົດຂອງບ້ານ. ບັນດາກິດຈະກຳ ຈະເສີມສ້າງຄວາມສາມາດຂອງຊຸມຊົນ ເພື່ອຈັດລຽງບູລິມະສິດຄວາມຕ້ອງການລະດັບບ້ານ ທີ່ທົນທານຕໍ່ສະພາບອາກາດ ແລະ ການລົງທຶນໃສ່ພື້ນຖານໂຄງລ່າງຂະໜາດນ້ອຍທີ່ກ່ຽວຂ້ອງ ແລະ ການດຳເນີນງານ ແລະ ການບຳລຸງຮັກສາ (O&M). ທັງໝົດນີ້ ຈະເນັ້ນໃສ່ສົ່ງເສີມການມີສ່ວນຮ່ວມຂອງສະມາຊິກໃນຊຸມຊົນ ໂດຍສະເພາະຄວາມຕ້ອງການຂອງແມ່ຍິງ, ທຸກກຸ່ມຊົນເຜົ່າ ແລະ ກຸ່ມທີ່ມີຄວາມສ່ຽງ. ຈະໃຫ້ບຸລິມະສິດແກ່ບັນດາຄວາມຕ້ອງການທີ່ຈະແກ້ໄຂອຸປະສັກຕໍ່ກັບຄວາມໝັ້ນຄົງດ້ານສະບຽງອາຫານ, ການປັບປຸງໂພຊະນາການ, ແລະ/ຫຼື ການສ້າງລາຍຮັບ ໂດຍການມີສ່ວຮ່ວມຂອງກຸ່ມເຫຼົ່ານັ້ນ. ການອອກແບບ, ການດຳເນີນງານ ແລະ ການບຳລຸງຮັກສາ ພື້ນຖານໂຄງລ່າງຂະຫນາດນ້ອຍ ຈະລວມເອົາລັກສະນະທີ່ມີການປ່ອຍທາດກາກບອນຕ່ຳ, ທົນທານຕໍ່ສະພາບອາກາດ ເຊັ່ນ: ການປະຕິບັດງານ, ຄວາມທົນທານ, ແລະ ຄວາມປອດໄພ.

**ອົງປະກອບ 2: ການສ້າງຄວາມອາດສາມາດໃນວຽກງານປັບປຸງຊີວິດການເປັນຢູ່ (7.95 ລ້ານໂດລາສະຫາລັດ).** ອົງປະກອບນີ້ສະຫນັບສະຫນູນກິດຈະກຳລະດັບກຸ່ມທີ່ສົ່ງເສີມການສ້າງລາຍຮັບ. ກຸ່ມຈະໄດ້ປັບຕົວເຂົ້າກັບສະພາບເສດຖະກິດ-ສັງຄົມ ແລະ

ສະພາບອາກາດຂອງບ້ານ. ຢູ່ໃນບ້ານປະເພດ II ແລະ ປະເພດ III, ໂຄງການ ປສຊ ຈະສະໜັບສະໜູນກຸ່ມທ້ອນເງິນ ແລະ ສິນເຊື່ອ, ສ່ວນຫຼາຍແມ່ນແມ່ຍິງ, ການສ້າງຄວາມຮູ້ດ້ານການເງິນ, ແລະ ກິດຈະກໍາການສ້າງລາຍຮັບທີ່ມີຄວາມຫຼາກຫຼາຍ ທົນທານຕໍ່ສະພາບອາກາດ. ໃນບາງບ້ານປະເພດ III ທີ່ມີທ່າແຮງດ້ານການຕະຫຼາດ, ໂຄງການ ຈະສະໜັບສະໜູນ ແລະ ການສ້າງຄວາມອາດສາມາດຂອງກຸ່ມຜະລິດ ທີ່ມີຢູ່ແລ້ວ ແລະ ຜູ້ສະໜອງປັດໃຈການຜະລິດກະສິກໍາທີ່ທົນທານຕໍ່ສະພາບອາກາດ. ໃນບ້ານປະເພດ I ທີ່ມີຄວາມສາມາດໃນການພັດທະນາວຽກງານທ້ອນເງິນ ແລະ ສິນເຊື່ອ ຈໍາກັດ ຍ້ອນສະມາຊິກໃນກຸ່ມສ່ວນໃຫຍ່ ທັງຍິງ ແລະ ຊາຍ ມີສະພາບຄວາມທຸກຍາກກວ່າ, ກຸ່ມເຫຼົ່ານີ້ ຈະເນັ້ນໃສ່ການຜະລິດສະບຽງອາຫານໃຫ້ພຽງພໍໃນການບໍລິໂພກ ແລະ ການສ້າງລາຍຮັບ.

**ອົງປະກອບ 3: ການສົ່ງເສີມການເຂົ້າເຖິງໂພຊະນາການຂອງຊຸມຊົນ (4.75 ລ້ານໂດລາສະຫາລັດ).** ອົງປະກອບນີ້ ສະຫນັບສະຫນູນການປັບປຸງການບໍລິໂພກອາຫານ (ທັງດ້ານຄຸນນະພາບ ແລະ ປະລິມານ) ຂອງແມ່ ແລະ ເດັກ ອາຍຸ 1.000 ວັນທໍາອິດ ໂດຍການສົ່ງເສີມການປະຕິບັດດ້ານໂພຊະນາການທີ່ດີ. ອົງປະກອບນີ້ ແມ່ນອີງໃສ່ 5 ຫຼັກການ ຄື: (ກ) ການນໍາສະເໜີການບໍລິໂພກອາຫານທີ່ປຸງແຕ່ງພາຍໃນບ້ານທີ່ປະຫຍັດເວລາ, (ຂ) ການປະກອບສ່ວນຂອງຊຸມຊົນ, (ຄ) ການສ້າງແຮງຈູງໃຈອີງໃສ່ຜົນໄດ້ຮັບ ສໍາລັບຊາວບ້ານທີ່ຈັດຕັ້ງປະຕິບັດໄດ້ດີ, (ງ) ການເສີມສ້າງຄວາມເຂັ້ມແຂງຂອງໄວໜຸ່ມ ແລະ ສື່ສັງຄົມ ແລະ ການເພີ່ມແຫຼ່ງອາຫານໃນຂັ້ນທ້ອງຖິ່ນໃຫ້ຫຼາຍຂຶ້ນ. ຄວາມທົນທານຂອງຊຸມຊົນ ຈະຖືກເສີມສ້າງ ໂດຍການປະສົມປະສານລະຫວ່າງ ອາຫານຈາກການຜະລິດຂອງຄົວເຮືອນ, ການຊື້ອາຫານ ແລະ ການເກັບອາຫານຈາກປ່າ. ແຫຼ່ງສະບຽງອາຫານ ຈະໄດ້ຮັບກາສົ່ງເສີມ, ເປັນຕົ້ນແມ່ນ ເຂດຜະລິດ ເຊັ່ນ: ສວນຄົວ, ຮົ້ວສວນ, ເຂດປູກເຂົ້າເນີນສູງ, ທົ່ງນາ, ປະເພດພືດ ແລະ ສູດອາຫານຕ່າງໆ, ຈະຖືກດັດປັບໃຫ້ແທດເໝາະກັບສະພາບນິເວດກະສິກໍາ ແລະ ວັດທະນະທໍາຂອງຊຸມຊົນ.

**ອົງປະກອບ 4: ວຽກງານຄຸ້ມຄອງບໍລິຫານ, ການສ້າງຄວາມເຂັ້ມແຂງ, ຕິດຕາມ ແລະ ປະເມີນຜົນ (4.7 ລ້ານໂດລາສະຫາລັດ).** ອົງປະກອບນີ້ ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ການດໍາເນີນງານ ສໍາລັບການຄຸ້ມຄອງໂຄງການໃນແຕ່ລະຈໍາວັນ ແລະ ລະບົບການຕິດຕາມ ແລະ ການປະເມີນຜົນ. ຊຶ່ງກວມເອົາການຈ້າງ, ການຝຶກອົບຮົມ, ແລະ ການໃຫ້ຄ່າຕອບແທນແກ່ພະນັກງານ ຢູ່ຂັ້ນສູນກາງ ແລະ ຂັ້ນເມືອງ ລວມທັງ ຄ່າໃຊ້ຈ່າຍຂອງຜູ້ອໍານວຍຄວາມສະດວກຂັ້ນບ້ານ; ອຸປະກອນທີ່ກ່ຽວຂ້ອງ ແລະ ຄ່າໃຊ້ຈ່າຍໃນການດໍາເນີນງານ; ແລະ ການບັນຊີ, ການຈັດຊື້ຈັດຈ້າງ, ການຄຸ້ມຄອງທາງດ້ານການເງິນ, ການຄວບຄຸມພາຍໃນ, ການກວດສອບ, ການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ, ການຕິດຕາມ-ປະເມີນຜົນ, ແລະ ການສະຫນັບສະຫນູນດ້ານອື່ນໆ.

**ອົງປະກອບ 5: ນະໂຍບາຍການແກ້ໄຂໄພພິບັດສຸກເສີນ (0 ໂດລາສະຫາລັດ).** ໃນເບື້ອງຕົ້ນ ອົງປະກອບນີ້ ຈະບໍ່ມີການຈັດສັນງົບປະມານໄວ້ລ່ວງໜ້າ ແຕ່ຈະມີການຈັດສັນງົບປະມານມາຈາກອົງປະກອບອື່ນ ເພື່ອຕອບສະໜອງຢ່າງຮີບດ່ວນກັບວິກິດການ ຫຼື ເຫດການສຸກເສີນ ທີ່ລັດຖະບານ ປະກາດເປັນໄພພິບັດລະດັບຊາດ ທີ່ອາດຈະເກີດຂຶ້ນ ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ. ທັງສາມປະເພດບ້ານ ແມ່ນເງື່ອນໄຂເທົ່າທຽມກັນທີ່ຈະໄດ້ຮັບການສະໜັບສະໜຸນ ໃນເວລາເກີດເຫດການໄພພິບັດ. ກິດຈະກໍາຂອງອົງປະກອບນີ້ ຈະອີງໃສ່ຍຸດທະສາດການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ຂອງ ສປປ ລາວ.

## ຂ. ບົດບາດໂດຍລວມ

ພະນັກງານກະສິກໍາ ແລະ ປັບປຸງຊີວິດການເປັນຢູ່ ເມືອງ ມີໜ້າທີ່ຮັບຊອບເພື່ອຮັບປະກັນການຈັດຕັ້ງປະຕິບັດກິດຈະກໍາການປັບປຸງຊີວິດການເປັນຢູ່ ພາຍໃຕ້ອົງປະກອບທີ 2: ການສ້າງຄວາມອາດສາມາດໃນວຽກງານປັບປຸງຊີວິດການເປັນຢູ່ ໄດ້ຖືກຈັດຕັ້ງປະຕິບັດຢູ່ໃນພື້ນທີ່ບ້ານເປົ້າໝາຍຂອງໂຄງການ ຕາມແຜນວຽກທີ່ໄດ້ກໍານົດໄວ້, ຄູ່ມືການຈັດຕັ້ງປະຕິບັດໂຄງການ (PIM), ຄູ່ມືການເງິນຈຸລະພາກ ແລະ ການປັບປຸງຊີວິດການເປັນຢູ່ ເຊັ່ນ: ຄູ່ມືກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ (ກຊກ), ຄູ່ມືກຸ່ມຜະລິດ,

ຄູ່ມືຜູ້ສະໜອງປັດໃຈຢູ່ທ້ອງຖິ່ນ, ບົດແນະນຳຜູ້ອຳນວຍຄວາມສະດວກຂັ້ນບ້ານ, ຄູ່ມືກິດຈະກຳການສ້າງລາຍຮັບ ທີ່ປະກອບດ້ວຍການປູກພືດ, ການລ້ຽງສັດ, ຜະລິດຕະພັນເຄື່ອງປ່າຂອງດົງ, ການລ້ຽງສັດນ້ຳ, ການຕ່ຳຫູກ ແລະ ຫັດຖະກຳ.

## ຄ. ໜ້າທີ່ ແລະ ຄວາມຮັບຜິດຊອບ

*ການຄຸ້ມຄອງ ແລະ ກວດກາ*

1. ເຂົ້າຮ່ວມໃນຂະບວນການວາງແຜນໃນລະດັບບ້ານ ອີງຕາມຄູ່ມືການຈັດຕັ້ງປະຕິບັດໂຄງການ ແລະ ຄູ່ມືການເງິນຈຸລະພາກ ແລະ ການປັບປຸງຊີວິດການເປັນຢູ່ ເພື່ອຮັບປະກັນຄວາມຕ້ອງການ ແລະ ບຸລິມະສິດດ້ານຊີວິດການເປັນຢູ່ ສະແດງໃຫ້ເຫັນຢູ່ໃນແຜນພັດທະນາບ້ານ;
2. ໃຫ້ການສະໜັບສະໜູນດ້ານວິຊາການແກ່ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ໃນການປັບປຸງຊີວິດການເປັນຢູ່ ແລະ ຜູ້ອຳນວຍຄວາມສະດວກຂັ້ນບ້ານ ເພື່ອຈັດຕັ້ງປະຕິບັດວຽກງານການເງິນຈຸລະພາກຢ່າງມີປະສິດທິຜົນ ເຊັ່ນ: ກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ (ກຊກ), ຄະນະກຳມະການຄຸ້ມຄອງ ກຊກ ຂັ້ນບ້ານ (ຄບກ), ການສະໜອງເງິນຕົ້ນທຶນ, ການຄຸ້ມຄອງເງິນຕົ້ນທຶນ ແລະ ກິດຈະກຳປັບປຸງຊີວິດການເປັນຢູ່ ເຊັ່ນ: ກິດຈະກຳການສ້າງລາຍຮັບ (ການປູກພືດ, ການລ້ຽງສັດ, ການລ້ຽງສັດນ້ຳ, ຜະລິດຕະພັນເຄື່ອງປ່າຂອງດົງ, ການຕ່ຳຫູກ ແລະ ຫັດຖະກຳ), ຜູ້ທີ່ສະໜອງປັດໃຈການຜະລິດຢູ່ໃນທ້ອງຖິ່ນ, ກຸ່ມຜູ້ຜະລິດ, ແລະ ອື່ນໆ ໂດຍຜ່ານການສະໜອງເງິນຕົ້ນທຶນໂດຍໂຄງການ;
3. ສະໜັບສະໜູນພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ແລະ ຜູ້ອຳນວຍຄວາມສະດວກຂັ້ນບ້ານ ເພື່ອສ້າງຄອບຄົວຕົວແບບດ້ານປັບປຸງຊີວິດການເປັນຢູ່ ໃນກິດຈະກຳສ້າງລາຍຮັບຕ່າງໆ (ຫຼື ຄອບຄົວຕົວແບບດ້ານການສ້າງລາຍ);
4. ຮວບຮວມແຜນວຽກການປັບປຸງຊີວິດການເປັນຢູ່ ທີ່ກະກຽມໂດຍ ຄບກ ບ້ານ, ກຸ່ມຜູ້ຜະລິດ, ຜູ້ສະໜອງປັດໃຈການຜະລິດໃນທ້ອງຖິ່ນ ເພື່ອກວດກາຄືນ ແລະ ສະເໜີໃຫ້ຫົວໜ້າທີມງານເມືອງ ແລະ ແຜນວຽກໂຄງການທັງໝົດຂອງເມືອງຈະຖືກນຳສົ່ງໃຫ້ຫ້ອງການໂຄງການ ປສຊ ຂັ້ນສູນກາງ ໃຫ້ການອະນຸມັດ;
5. ອຳນວຍຄວາມສະດວກ ແລະ ສະໜັບສະໜູນ ການມາຕິດຕາມການຈັດຕັ້ງປະຕິບັດໂຄງການ ປສຊ ຂອງຄະນະທີມງານຈາກຜູ້ໃຫ້ທຶນ, ການລົງຢ້ຽມຢາມພາກສະໜາມທາງດ້ານວິຊາການ ແລະ ການສຶກສາ/ການປະເມີນ ກ່ຽວຂ້ອງກັບວຽກງານການເງິນຈຸນລະພາກ ແລະ ກິດຈະກຳການປັບປຸງຊີວິດການເປັນຢູ່ ທີ່ຢູ່ໃນຂອບເຂດເມືອງທີ່ຮັບຜິດຊອບ;
6. ດຳເນີນການສຳຫຼວດຄົວເຮືອນ ແລະ ວາງແຜນ ກິດຈະກຳປັບປຸງຊີວິດການເປັນຢູ່ ພ້ອມທັງ ກຳນົດລະດັບຄວາມສຳຄັນຂອງກິດຈະກຳ;
7. ໃຫ້ການສະໜັບສະໜູນດ້ານການປັບປຸງຊີວິດການເປັນຢູ່ ໃຫ້ແກ່ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ໃນການສ້າງຕັ້ງ ແລະ ການເຄື່ອນໄຫວຂອງ ກຊກ, ການຄຸ້ມຄອງກຸ່ມ, ການເຮັດບັນຊີ ແລະ ການຄຸ້ມຄອງການເງິນ, ການເບີກຈ່າຍເງິນກູ້ ໃຫ້ທັນເວລາ ແລະ ການຊຳລະຄືນເງິນກູ້ ຕາມກຳນົດເວລາ, ການໝູນວຽນເງິນກູ້ ແລະ ອື່ນໆ ຕາມຄວາມເໝາະສົມ;
8. ສະໜອງ ແລະ ຊ່ວຍເຫຼືອ ກິດຈະກຳສ້າງຄວາມເຂັ້ມແຂງ ໃຫ້ແກ່ຜູ້ອຳນວຍຄວາມສະດວກຂັ້ນບ້ານ ແລະ ຊາວບ້ານ ໃນກິດຈະກຳການປັບປຸງຊີວິດການເປັນຢູ່ ເຊັ່ນ: ການເງິນຈຸນລະພາກ ແລະ ການສ້າງລາຍຮັບ (ການປູກພືດ, ການລ້ຽງສັດ, ການລ້ຽງສັດນ້ຳ, ຜະລິດຕະພັນເຄື່ອງປ່າຂອງດົງ, ການຕ່ຳຫູກ, ຫັດຖະກຳ, ແລະ ອື່ນໆ) ໂດຍຜ່ານການຝຶກອົບຮົມ ແລະ ການຝຶກແອບຕົວຈິງ, ການຢ້ຽມຢາມພາກສະໜາມ, ການແລກປ່ຽນປະສົບການ, ແລະ ການຢ້ຽມຢາມແລກປ່ຽນບົດຮຽນຢູ່ສະຖານທີ່ປະຕິບັດທີ່ດີທີ່ສຸດ, ແລະ ອື່ນໆ;
9. ວາງແຜນ ແລະ ດຳເນີນ ການສ້າງຄວາມເຂັ້ມແຂງຂອງສະມາຊິກ ກຊກ ເພື່ອດັດປັບ ແລະ ຂະຫຍາຍການຈັດຕັ້ງປະຕິບັດທີ່ເໝາະສົມກັບສະພາບອາກາດ ອອກສູ່ວົງກວ້າງ, ການຜະລິດກະສິກຳທີ່ດີ, ການເພີ່ມການຜະລິດ ແລະ ສະມັດຕະພາບຜົນຜະລິດ ຂອງການປູກພືດ, ຜັກ, ແລະ ຕົ້ນໄມ້ກິນໝາກ ແບບດັ້ງເດີມ ແລະ ເປັນສິນຄ້າ ໂດຍໄດ້ຮັບການສະໜັບສະໜູນຈາກວິຊາການຂອງໂຄງການ ປສຊ ຂັ້ນສູນກາງ;

10. ວາງແຜນ ແລະ ດຳເນີນ ການສ້າງຄວາມເຂັ້ມແຂງຂອງສະມາຊິກ ກຸ່ມຜູ້ຜະລິດ ແລະ ຜູ້ສະໜອງປັດໃຈການຜະລິດໃນທ້ອງຖິ່ນ ເພື່ອກະກຽມ ແລະ ຈັດຕັ້ງປະຕິບັດ ແຜນທຸລະກິດ, ຂະຫຍາຍການຜະລິດ ແລະ ທຸລະກິດ, ການເຊື່ອມຈອດກັບຕະຫຼາດ (ທີ່ມີຢູ່ແລ້ວ ແລະ ໃໝ່), ການຂາຍຜົນຜະລິດໃນລາຄາທີ່ໃຫ້ຜົນຕອບແທນສູງ ແລະ ອື່ນໆ ໂດຍການສະ ໜັບສະໜູນຈາກວິຊາການຂອງໂຄງການ ປສຊ ຂັ້ນສູນກາງ;
11. ຊ່ວຍເຫຼືອ ກຊກ ແລະ ກຸ່ມຜູ້ຜະລິດ ໃນສ້າງການຮ່ວມມືໄລຍະຍາວ ກັບພາກເອກະຊົນ/ບໍລິສັດ ຢູ່ໃນທ້ອງຖິ່ນ ເພື່ອເຊື່ອມຈອດຜົນຜະລິດ ຂອງ ກຊກ ແລະ ກຸ່ມຜູ້ຜະລິດ ກັບຕະຫຼາດ;
12. ຊ່ວຍເຫຼືອ ກຊກ ແລະ ກຸ່ມຜູ້ຜະລິດ ໃຫ້ເຊື່ອມຈອດກັບສະຖາບັນການເງິນໃນທ້ອງຖິ່ນ ເຊັ່ນ: ທະນາຄານນະໂຍບາຍ.

*<u>ການສ້າງຄວາມເຂັ້ມແຂງ</u>*

13. ສະໜອງການຝຶກອົບຮົມ ແລະ ການຝຶກແອບຕົວຈິງ ໃຫ້ແກ່ ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ແລະ ຜູ້ອຳນວຍຄວາມສະດວກຂັ້ນບ້ານ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ ສະມາຊິກ ກຊກ, ຄບກ, ກຸ່ມຜູ້ຜະລິດ, ຜູ້ສະໜອງປັດໃຈການຜະລິດໃນທ້ອງຖິ່ນ ໂດຍການຝຶກອົບຮົມຢ່າງເປັນລະບົບຕາມຫົວຂໍ້ ກ່ຽວກັບການສ້າງກຸ່ມ ແລະ ການຄຸ້ມຄອງ, ຄວາມຮູ້ດ້ານການເງິນ ແລະ ການຄຸ້ມຄອງການເງິນ, ແຜນການລົງທຶນຂອງຄອບຄົວ ແລະ ແຜນການລົງທຶນຂະໜ້ານ້ອຍ ຂອງ ກຊກ; ແຜນສະເໜີທາງທຸລະກິດ ຂອງກຸ່ມຜູ້ຜະລິດ ແລະ ຜູ້ສະໜອງປັດໃຈການຜະລິດໃນທ້ອງຖິ່ນ; ການເພີ້ມການຜະລິດ, ສະມັດຕະພາບການຜະລິດ, ແລະ ການເຂົ້າເຖິງຕະຫຼາດ ສຳລັບພືດ, ສັດລ້ຽງ, ສັດນ້ຳ, ຜະລິດຕະພັນເຄື່ອງປ່າຂອງດົງ, ການຕໍ່າຫູກ ແລະ ຫັດຖະກຳ ແລະ ການປະຕິບັດກິດຈະກຳການສ້າງລາຍຮັບຕ່າງໆທີ່ເປັນມິດກັບສະພາບດິນຟ້າອາກາດ;
14. ສະໜັບສະໜູນຫົວໜ້າທີມງານເມືອງ ແລະ ທີມງານໂຄງການຂັ້ນເມືອງ ໃນການຝຶກອົບຮົມໃຫ້ແກ່ຄະນະພັດທະນາບ້ານ;
15. ຝຶກອົບຮົມກ່ຽວກັບການບັນທຶກ, ການປ້ອນຂໍ້ມູນເຂົ້າໃນ Kobo Toolbox ໃຫ້ແກ່ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ຮ່ວມກັບພະນັກງານຕິດຕາມ-ປະເມີນຜົນເມືອງ ແລະ ທີມງານໂຄງການຂັ້ນເມືອງຄົນອື່ນໆ;
16. ສະໜັບສະໜູນການຝຶກອົບຮົມໃຫ້ແກ່ ຄບກ, ກຊກ, ແລະ ກຸ່ມຜູ້ຜະລິດ ກ່ຽວກັບການບັນທຶກຂໍ້ມູນ ຮ່ວມກັນກັບພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ;
17. ຝຶກອົບຮົມ ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ກ່ຽວກັບຂໍ້ກຳນົດຂອງຂໍ້ມູນ, ຂະບວນການ, ແລະ ການປ້ອນຂໍ້ມູນເຂົ້າໃນ Kobo Toolbox ແລະ ຖານຂໍ້ມູນ MIS;
18. ກະກຽມລະບຽບການ ແລະ ໜ້າວຽກ ເພື່ອສ້າງຄອບຄົວຕົວແບບ ດ້ວຍການສ້າງຄວາມເຂັ້ມແຂງຂອງ ຜູ້ອຳນວຍຄວາມສະດວກຂັ້ນບ້ານ ແລະ ຊາວກະສິກອນ;
19. ລົງຢ້ຽມຢາມພາກສະໜາມເປັນປະຈຳ ເພື່ອສະໜອງການຝຶກອົບຮົມວຽກງານຕົວຈິງ ໃຫ້ແກ່ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ, ຜູ້ອຳນວຍຄວາມສະດວກຂັ້ນບ້ານ, ແລະ ສະມາຊິກ ກຊກ ແລະ ທົບທວນຄືນຄວາມຄືບໜ້າ ເພື່ອເປັນກຳນົດທິດທາງຈັດຕັ້ງປະຕິບັດໃນຕໍ່ໜ້າ.

*<u>ການສື່ສານ ແລະ ການເຮັດວຽກເປັນທີມ</u>*

20. ປະສານງານຢ່າງໃກ້ຊິດກັບ ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ, ຜູ້ອຳນວຍຄວາມສະດວກຂັ້ນບ້ານ, ທີມງານໂຄງການ ປສຊ ເມືອງ ອີງຕາມຄວາມຕ້ອງການຂອງໂຄງການ;
21. ເຂົ້າຮ່ວມການຝຶກອົບຮົມ, ກອງປະຊຸມ, ການໄປເບິ່ງກິດຈະກຳຕົວຈິງ ແລະ ອື່ນໆ ທີ່ຈັດຂຶ້ນໂດຍໂຄງການ ປສຊ ຢູ່ຂັ້ນບ້ານ, ກຸ່ມບ້ານ, ຂັ້ນເມືອງ, ຂັ້ນແຂວງ, ຂັ້ນສູນກາງ;
22. ສະໜັບສະໜູນທີມງານໂຄງການ ປສຊ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດກອບດ້ານສິ່ງແວດລ້ອມ ແລະ ສັງຄົມ, ລວມທັງວຽກງານການມີສ່ວນຮ່ວມດ້ານສັງຄົມ ແລະ ບົດບາດຍິງ-ຊາຍ;

23. ເຂົ້າຮ່ວມຂະບວນການ ສ້າງແຜນພັດທະນາບ້ານ ເພື່ອຮັບປະກັນວ່າບັນດາໂຄງລ່າງພື້ນຖານຂະໜາດນ້ອຍ ແມ່ນສະໜັບສະໜູນກິດຈະກໍາສ້າງລາຍຮັບຂອງສະມາຊິກ ກຊກ ແລະ ກຸ່ມຜູ້ຜະລິດ;
24. ແບ່ງປັນແນວຄວາມຄິດ ແລະ ປະສົບການ ກັບພະນັກງານກະສິກໍາ ແລະ ການປັບປຸງຊີວິດການເປັນຢູ່ ຂັ້ນເມືອງຜູ້ອື່ນໆ ຂອງໂຄງການ ປສຊ ກ່ຽວກັບກິດຈະກໍາການປັບປຸງຊີວິດການເປັນຢູ່.

*ການຕິດຕາມ ການວິເຄາະ ແລະ ການລາຍງານ*

25. ຊີ້ນໍາ ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ເພື່ອຮັບປະກັນວ່າ ການປ້ອນຂໍ້ມູນເຂົ້າໃນ Kobo Toolbox ສໍາລັບກິດຈະກໍາປັບປຸງຊີວິດການເປັນຢູ່ ເຊັ່ນ: ກຊກ, ກຸ່ມຜູ້ຜະລິດ, ກິດຈະກາການສ້າງລາຍຮັບ, ຜູ້ທີ່ສະໜອງປັດໃຈການຜະລິດໃນທ້ອງຖິ່ນ ຖືກເກັບກໍາຂໍ້ຢ່າງທັນເວລາ ແລະ ຖືກຕ້ອງ;
26. ກວດສອບບັນດາຂໍ້ມູນໃນ Kobo Toolbox ທີ່ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ໄດ້ຕື່ມໃສ່ ໂດຍການຮ່ວມມືກັບພະນັກງານຕິດຕາມ-ປະເມີນຜົນ ເມືອງ ເພື່ອໃຫ້ທີມງານຄຸ້ມຄອງໂຄງການຂັ້ນສູນກາງ ສາມາດເຂົ້າເບິ່ງ ແລະ ກວດສອບໄດ້ (ປະຈໍາອາທິດ);
27. ກວດສອບຂໍ້ມູນພາກສະໜາມເພື່ອກວດກາຄຸນນະພາບຂໍ້ມູນໃນລະທີ່ລົງພາກສະໜາມ;
28. ປ້ອນຂໍ້ມູນທີ່ຈໍາເປັນຢ່າງເປັນປະຈໍາ ເຂົ້າໃນລະບົບຖານຂໍ້ມູນ MIS;
29. ໃຊ້ຂໍ້ມູນໃນຖານຂໍ້ມູນ MIS ຫຼື Kobo Toolbox ເພື່ອການຕັດສິນໃຈ ແລະ ກໍານົດບັນຫາ ແລະ ການປະຕິບັດວຽກງານທີ່ເໝາະສົມທີ່ສຸດ;
30. ຕິດຕາມຄວາມຄືບໜ້າຂອງກິດຈະກໍາປັບປຸງຊີວິດການເປັນຢູ່ ເຊັ່ນ: ກຊກ, ກຸ່ມຜູ້ຜະລິດ, ກິດຈະກໍາການສ້າງລາຍຮັບ, ຜູ້ສະໜອງປັດໃຈການຜະລິດໃນທ້ອງຖິ່ນ ທີ່ຈັດຕັ້ງປະຕິບັດຢູ່ເມືອງທີ່ຮັບຜິດຊອບ;
31. ສັງລວມຂໍ້ມູນ ແລະ ຜົນໄດ້ຮັບຂອງຕົວຊີ້ວັດ ການຕິດຕາມກິດຈະກໍາປັບປຸງຊີວິດການເປັນຢູ່ທັງໝົດ ເຊັ່ນ: ກຊກ, ກຸ່ມຜູ້ຜະລິດ, ກິດຈະກໍາການສ້າງລາຍຮັບ, ຜູ້ສະໜອງປັດໃຈການຜະລິດໃນທ້ອງຖິ່ນ;
32. ຊ່ວຍເຫຼືອ ຜູ້ອໍານວຍຄວາມສະດວກຂັ້ນບ້ານ ໂດຍຜ່ານພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ກ່ຽວຂ້ອງກັບການທົບທວນການປະຕິບັດວຽກຂອງ ກຊກ ແລະ ກິດຈະກໍາການສ້າງລາຍຮັບ, ແລະ ກໍານົດຄວາມຕ້ອງການສ້າງຄວາມເຂັ້ມແຂງຂອງເຂົາເຈົ້າ ແລະ ກະກຽມແຜນການສ້າງຄວາມເຂັ້ມແຂງ;
33. ສ້າງແຜນວຽກປະຈໍາເດືອນ ແລະ ບົດລາຍງານຄວາມຄືບໜ້າປະຈໍາເດືອນ ທີ່ກ່ຽວຂ້ອງກັບວຽກງານປັບປຸງຊີວິດການເປັນຢູ່ ເຊັ່ນ: ກຊກ, ກຸ່ມຜູ້ຜະລິດ, ກິດຈະກໍາການສ້າງລາຍຮັບ, ແລະ ຜູ້ສະໜອງປັດໃຈການຜະລິດໃນທ້ອງຖິ່ນ;
34. ສະໜັບສະໜຸນ ແລະ ກະກຽມ ຂໍ້ມູນສັງລວມຂອງບ້ານ ແລະ ການນໍາສະເໜີໃຫ້ຜູ້ທີ່ມາຢ້ຽມຢາມ ແລະ ໜ່ວຍງານຕ່າງໆ ຕາມການກໍານົດຂອງຫົວໜ້າທີມງານເມືອງ.

*ວຽກງານທີ່ກ່ຽວຂ້ອງອື່ນໆ*

35. ໃນຂອບເຂດຄວາມຮັບຜິດຊອບ, ສົ່ງເສີມ ແລະ ອະທິບາຍ ຫຼັກການ ແລະ ຂະບວນການຈັດຕັ້ງປະຕິບັດ ຂອງໂຄງການ ປສຊ ໃຫ້ແກ່ພາກສ່ວນລັດຖະບານ, ຜູ້ໃຫ້ທຶນ, ພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການທີ່ບໍ່ແມ່ນລັດຖະບານ;
36. ປະຕິບັດວຽກງານອື່ນໆ ຕາມການຮຽກຮ້ອງຂອງຜູ້ຊີ້ນໍາ ແລະ ທີ່ປຶກສາດ້ານວິຊາການ, ຕາມຄວາມຕ້ອງການຂອງໂຄງການ.

## ງ. ເງື່ອນໄຂຂອງຜູ້ສະໝັກ

- ຢ່າງໜ້ອຍຕ້ອງຮຽນຈົບລະດັບຊັ້ນສູງ ສາຂາກະສິກໍາ, ລ້ຽງສັດ, ປ່າໄມ້, ການປະມົງ, ການເງິນ, ການພັດທະນາຊົນນະບົດ ຫຼື ສາຂາອື່ນທີ່ກ່ຽວຂ້ອງ;

- ມີປະສົບການຢ່າງໜ້ອຍ 3 ປີ ໃນການຈັດຕັ້ງປະຕິບັດໂຄງການທີ່ກ່ຽວຂ້ອງກັບການປັບປຸງຊີວິດການເປັນຢູ່ ແລະ ການປູກຝັງ ແລະ ການສົ່ງເສີມການລ້ຽງສັດ, ໂດຍສະເພາະ ປະສົບການໃນການສ້າງກຸ່ມ ແລະ ການຄຸ້ມຄອງ, ການເງິນຈຸລະພາກຊົນນະບົດ, ແລະ ກິດຈະກໍາສ້າງລາຍຮັບ ລວມທັງການລະດົມຊຸມຊົນ;
- ມີປະສົບການໃນການຝຶກອົບຮົມໃຫ້ແກ່ປະຊາຊົນ ຫຼື ຊຸມຊົນທ້ອງຖິ່ນ;
- ສາມາດເວົ້າພາສາຊົນເຜົ່າທ້ອງຖິ່ນໄດ້ ຈະພິຈາລະນາເປັນພິເສດ;
- ມີທັກສະທາງດ້ານຄອມພິວເຕີດີ ໂດຍສາມາດນໍາໃຊ້ໂປແກຣມ Microsoft Office (Word, Excel, PPT);
- ມີທັກສະໃນການແກ້ໄຂບັນຫາ ແລະ ການສື່ສານທີ່ດີ;
- ມີຄວາມສາມາດໃນການເດີນທາງໄປ ແລະ ເຮັດວຽກ ໃນເຂດຊົນນະບົດໄດ້;
- ເປັນຄົນສັນຊາດລາວເທົ່ານັ້ນ.